ກຳລັງທັບເສຣີປະຊາທິປະໄຕລາວ
Lao Liberal Democratic Movement & Freedom Fighters
Central Representative P. O. Box 189486. 2121 Broadway St. Sacramento, CA. 95818. U.S.A.
P.O Box 189486. 2121 Broadway St. Sacramento. CA 95818 U.S.A.
www.laofreedom.com

**ສູນກາງຕາງໜ້າ**

**ພັກ ແລະກຳລັງທັບເສຣີປະຊາທິປະໄຕລາວ.**

*** ຫ້ອງການ ປະທານພັກເສຣີປະຊາທິປະໄຕລາວ.**

**ເລກທີ່ ໔໗໘/ປພຖຊ/໑໔໐໔໐໙**

# ຖະແລງການ

## ປະນາມ 2 ທັນວາ ມະຫາອຸບາດ.

ພວກເຮົາ ປະຊາຊົນພັກ ແລະກຳລັງທັບເສຣີປະຊາທິປະໄຕລາວ, ກໍຄື ປະຊາຊົນລາວທັງຊາດ ໄດ້ອອກ ຖະແລງການສະບັບນີ້ ເພື່ອປະນາມ ໃນວັນທີ 2 ທັນວາ ມະຫະອຸບາດນີ້, ຮຽກຮ້ອງ ໃຫ້ພັກຣັດ ສປປລາວ. ຕັດສິນໃຈ ຫັນປ່ຽນ ຈາກການເປັນຂ້າທາດ ຂອງວຽດນາມ ມາເປັນເຈົ້າຂອງປະເທດຕົນເອງ ຢ່າງແທ້ຈິງ. ວັນທີ 2 ທັນວາ, ເປັນວັນ ມະຫາອຸບາດສຳລັບຊາດລາວ ຄົນລາວ, ເພາະມັນບໍ່ພຽງແຕ່ ເປັນວັນ ປະກາດ ຕັດສິດທິເສຣີພາບ ຂອງປະຊົນລາວເທົ່ານັ້ນ...ມັນຍັງເປັນວັນປະກາດ ເປັນຂ້າທາດ, ເປັນຫົວເມືອງຂຶ້ນຂອງວຽດນາມອີກດ້ວຍ.

ໃນຊ່ວງ 34 ປີ ທີ່ພັກຣັດວຽງຈັນ ປະຈຸບັນນີ້ ຂຶ້ນຄອງອຳນາດ ມານີ້, ປະເທດຊາດ ຖືກທຳລາຍ ແລະເສັຽຫາຍໄປນັບບໍ່ຖ້ວນ, ຍ້ອນປະເທດລາວ ຕົກເປັນຫົວເມືອງຂຶ້ນຂອງວຽດນາມ, ທັງແບບເກົ່າ ແລະແບບໃໝ່ ໄປພ້ອມໆກັນ. ເພື່ອລວງຕາປະຊາຊົນລາວ ແລະຊາວໂລກ, ວຽດນາມຕັ້ງພັກຣັດ ໃຫ້ເປັນຣັຖບານຫຸ່ນຂຶ້ນມາ ເພື່ອເຊັນສັນຍາມິຕພາບລາວ-ວຽດ ໃຫ້ເປັນໄປຕາມກົນໄກ ການພົວພັນສາກົນ; ແຕ່ທຸກຢ່າງ, ແມ່ນວຽດນາມ ເປັນຜູ້ບໍຣິຫານເອງໝົດ!. ພັກຣັດຈະເຮັດຫຍັງທຳຫຍັງ... ກໍຕ້ອງແມ່ນ ໄດ້ຮັບອະນຸຍາດຈາກວຽດນາມເສັຽກ່ອນ; ແມ່ນກະທັ່ງການຊ່ວຍເຫລືອຈາກຕ່າງປະເທດ, ວຽດນາມກໍຕ້ອງ ເອົາໄປໝົດເສັຽກ່ອນ. ວຽດນາມ ບອກ ພັກຣັດ ຕ້ອງຟັງ! ວຽດນາມສັ່ງ ພັກຣັດຕ້ອງເຮັດ!.

ສ່ວນວ່າ ການເປັນເມືອງຂຶ້ນແບບເກົ່ານັ້ນ, ວຽດນາມ ໃຫ້ພັກຣັດ ປະກາດ ເປັນເຂດ ເຂດຫວງຫ້າມ...ເພື່ອບໍ່ໃຫ້ໂລກກ່າວປະນາມ ການເຂົ້າມາຄອບຄອງລາວ ເປີດເຜີຍຈົນເກີນໄປ. ແຂວງຂອງລາວ ແຕ່ລະແຂວງ ກໍແມ່ນວຽດນາມ ເປັນຜູ້ປົກຄອງໂດຍຕຣົງຮອບດ້ານ. ຊັພຍາກອນທັມຊາດ ອັນອຸດົມ ສົມບູນຂອງລາວ, ທາດແຮ່ ໂລຫະ, ໄມ້ທ່ອນ... ກໍຂົນເຂົ້າໄປປ້ອນໂຮງຈັກໂຮງງານ ຂອງວຽດນາມ ຢ່າງມະຫາສານ. -ປະຊາຊົນວຽດນາມ ຫລາຍແສນຄົນ ເຂົ້າມາຢູ່ດິນລາວ ແທນບ່ອນຄົນລາວ ທີ່ໜີໄປຢູ່ຕ່າງປະເທດ.

ວຽດນາມຍ້າຍເຂົ້າມາຢູ່ ໃນໝູ່ບ້ານຊາຍແດນກ່ອນ, ຫລັງຈາກຮຽນພາສາ ແລະຮີດຄອງປະເພນີ ຂອງລາວ ໄດ້ແດ່ເລັກນ້ອຍ, ກໍພາກັນຍ້າຍເຂົ້າໄປຍາດແຍ່ງທີ່ທຳມາຫາກິນຂອງຄົນລາວຢູ່ໃນເມືອງ ແລະພວກອື່ນໆ ກໍຍ້າຍຕາມໆກັນເຂົ້າມາແທນບ່ອນ ຕໍ່ໆກັນມາ ຈົນເຖິງປະຈຸບັນນີ້.

ພວກເຮົາ ສນັບສນູນ ການຊຸມນຸມປະທ້ວງ ຂອງຄົນລາວນອກປະເທດ ຕາມສຖານທີ່ຕ່າງໆ, ເປັນຕົ້ນ :ຢູ່ຕໍ່ໜ້າສະຖານທູດລາວ ກຸງ ວໍຊິງຕັນ ດີຊີ, ສະຫະຣັດອະເມຣິກາ, ຢູ່ຝຣັ່ງເສດ ແລະຢູ່ ອົສຕຣາລີ ເນື່ອງໃນ ວັນທີ 2 ທັນວາ ມະຫະອຸບາດນີ້ ເພື່ອກ່າວປະນາມ ການຄອງອຳນາດ ແບບຜເດັດການພັກດຽວ ຕ້ານຊາດ, ຕ້ານປະຊາຊົນ ແລະຕ້ານສາກົນ ຂອງພັກຣັດ ສປປລາວ.

ພ້ອມດຽວກັນນີ້, ພວກເຮົາ ປະຊາຊົນພັກແລະກຳລັງທັບເສຣີປະຊາທິປະໄຕລາວ ກໍຄືປະຊາຊົນລາວ ທັງຊາດ, ຂໍຮຽກຮ້ອງມາຍັງ ອົງການຈັດຕັ້ງສາກົນ, ບັນດາປະເທດຍຸທສາດ ໃນການແກ້ໄຂບັນຫາລາວ, ສະມາຄົມອາຊຽນ, ສະຫະພັນຢູຣົບ ຕລອດຮອດ ສະຖາບັນການເງິນຕ່າງໆ, ເປັນຕົ້ນ ທະນາຄານໂລກ, ທະນາຄານ ພັທນາອາຊີແລະອື່ນໆ ຈົ່ງໄດ້ພິຈາຣະນາ ຕາມຄວາມຮຽກຮ້ອງຕ້ອງການ ຂອງປະຊາຊົນລາວ ທັງຊາດ ທີ່ຖືກຕັດສິດທິເສຣີພາບ, ກົດຂີ່ຂົ່ມເຫັງ ມາເປັນເວລາດົນນານ; ເຫລືອທີ່ຈະທົນໄດ້ ອີກຕໍ່ໄປແລ້ວ, ຈົ່ງໄດ້ ຕັດການຊ່ວຍເຫລືອ ແລະບີບຣັດໃຫ້ພັກຣັດ ສປປລາວ. ອອກມາ ໂອ້ລົມກັບພວກເຮົາ ປະຊາຊົນ ພັກ ແລະກຳລັງທັບເສຣີປະຊາທິປະໄຕລາວ ກໍຄືປະຊາຊົນລາວທັງຊາດ, ເພື່ອ ພ້ອມກັນແກ້ໄຂບັນຫາຊາດ ທີ່ມີຢູ່ນີ້ໃຫ້ສຳເຣັດໄປໄດ້ໂດຍໄວ ແລະຊາດລາວ ຄົນລາວ ຈະໄດ້ພົບກັບແສງສວ່າງ ແຫ່ງຄວາມມີອິສຣະພາບນັ້ນ ໄວຂຶ້ນຕື່ມອີກ.

**ປະຊາຊົນ ມີໄຊຍ໌ ເສຣີປະຊາທິປະໄຕ ອົງອາດ ຊາດລາວ ຈົ່ງຈເຣີນ.**

**ຂໍຂອບໃຈ.**

**ສູນກາງຕາງໜ້າ**

**ພັກ ແລະກຳລັງທັບເສຣີປະຊາທິປະໄຕລາວ**

**ຫ້ອງການປະທານພັກ**

**ອາຈານ ສົມນຶກ ຟອງສູວັນ**

**ວັນທີ ໔ ທັນວາ ໒໐໐໗.**